ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====----

ສໍານັກງານ ຄຄຊ

ພະແນກຈັດຕັ້ງ ແລະ ບໍລິຫານ

ນະຄອນຫຼວງວຽງຈັນ, ວັນທີ 03 ມັງກອນ 2015

ຮຽນ: ທ່ານ ນ. ສາຍສະໝອນ ຈັນທະຈັກ, ຮອງຫົວໜ້າສໍານັກງານ ຄຄຊ ທີ່ເຄົາລົບ ແລະ ນັບຖືຢ່າງສູງ;

ເລື່ອງ: ວິທີການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ ສຄຄຊ ປະຈໍາປີ 2014

- ອີງຕາມແຈ້ງການຂອງກົມຈັດຕັ້ງແລະພະນັກງານ, ເລກທີ 12/ກຈພ, ລົງວັນທີ 19 ມັງກອນ 2015;
- ອີງຕາມຜົນກອງປະຊຸມເຜີຍແຜ່ກ່ຽວກັບວຽກງານຈັດຕັ້ງປະເມີນພະນັກງານ ທຫລ ປະຈໍາປີ 2014, ທີ່ສໍານັກງານ ຄຄຊ ຄັ້ງວັນທີ 02 ກຸມພາ 2015;
- ອີງຕາມການຜົນການປຶກສາຫາລືຮ່ວມກັບກົມຈັດຕັ້ງແລະພະນັກງານ ທຫລ, ຄັ້ງວັນທີ 03 ມັງກອນ 2015.

ພະແນກຈັດຕັ້ງ ແລະ ບໍລິຫານ ຂໍຖືເປັນກຽດລາຍງານມາຍັງທ່ານຊາບ ກ່ຽວກັບລາຍລະອຽດວິທີການຂຽນໃບປະເມີນຜົນການປະຕິບັດວຽກງານຂອງພະນັກງານທະນາຄານແຫ່ງ ສປປ ລາວ ຕາມຄໍາຖາມເຈາະຈີ້ມທີ່ຍົກຂຶ້ນໃນກອງປະຊຸມເຜີຍແຜ່ການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ ສຄຄຊ ຄັ້ງວັນທີ 02 ກຸມພາ 2015 ທີ່ຜ່ານມາ ເຊິ່ງມີລາຍລະອຽດດັ່ງນີ້:

## I. ສະພາບທົ່ວໄປ

**ຂໍ້ 5. ໜ້າທີ່ຮັບຜິດຊອບປັດຈຸບັນ:** ການຂຽນແມ່ນໃຫ້ກໍານົດໜ້າວຽກຮັບຜິດຊອບຫຼັກຂອງຕົນ ໂດຍສັງລວມເອົາວຽກຫຼັກຈາກການກໍານົດຕໍາແໜ່ງງານ. **ສໍາລັບທ່ານ ທີ່ມີເງື່ອນໄຂປະເມີນຢູ່ກົມກອງເກົ່າຂອງຕົນ ແມ່ນໃຫ້ຂຽນໜ້າວຽກຕາມ ທີ່ປະຕິບັດຢູ່ກົມກອງເກົ່າ ແລະ ສໍາລັບທ່ານທີ່ໄດ້ມີການຍົກຍ້າຍຊັບປ່ຽນໜ້າທີ່ຮັບຜິດຊອບສະເພາະພາຍໃນ ສໍານັກງານ ຄຄຊ ແມ່ນໃຫ້ຂຽນໜ້າທີ່ຮັບຜິດຊອບຫຼັກໃນປັດຈຸບັນ.**

## II. ຕີລາຄາການເຄື່ອນໄຫວວຽກງານ

**ຂໍ້ 3. ຜົນສໍາເລັດການປະຕິບັດວຽກງານ:** ຜູ້ທີ່ມີເງື່ອນໄຂປະເມີນ ຈະຕ້ອງຕີລາຄາຜົນສໍາເລັດໃນການປະຕິບັດວຽກງານທັງໝົດຂອງປີ 2014 ທີ່ຕົນຍາດມາໄດ້. ສໍາລັບທ່ານທີ່ໄດ້ມີການຍົກຍ້າຍຊັບປ່ຽນສະເພາະພາຍໃນ ສໍານັກງານ ຄຄຊ ແມ່ນໃຫ້ຕີລາຄາຜົນການປະຕິບັດວຽກງານທັງເກົ່າ ແລະ ໃໝ່ ທີ່ສໍາເລັດພາຍໃນປີ 2014.

**ຂໍ້ 4. ການພົວພັນສັງຄົມ:** ຕີລາຄາກ່ຽວກັບແບບແຜນການດໍາລົງຊີວິດ, ການພົວພັນພັນກັບສັງຄົມ, ການພົວພັນກັບເພື່ອຮ່ວມງານພາຍໃນພະແນກ ແລະ ກົມກອງຂອງຕົນ ລວມທັງການພົວພັນກັບພາກສ່ວນພາຍນອກ.

**ຂໍ້ 5. ຄວາມສາມາດ ຫຼື ພອນສະຫວັນທີ່ຊໍານານ:** ຄວາມສາມາດທາງດ້ານວິຊາສະເພາະຂອງຕົນ ທີ່ນໍາໃຊ້ເຂົ້າໃນການປະຕິບັດວຽກງານ ຫຼື ພອນສະຫວັນໃນການປະຕິບັດ ທີ່ເກີດຈາກການສະສົມປະສົບການໃນການເຮັດວຽກເຖິງວ່າໜ້າທີ່ຮັບຜິດຊອບຈະບໍ່ແທດເໝາະກັບວິຊາສະເພາະແຕ່ກໍ່ສາມາດປະຕິບັດໜ້າທີ່ໄດ້ດີ ຖືວ່າເປັນພອນສະຫວັນໃນການເຮັດວຽກ (ບໍ່ແມ່ນພອນສະຫວັນດ້ານກິລາ ຫຼື ສິລະປະ).

<u>**ຜົນການປະເມີນຄັ້ງລ້າສຸດ**</u> ແມ່ນອີງຕາມຜົນການປະເມີນປະຈຳປີ (ປະຈຳປີ 2012 ຫຼື 2013 ຕາມເງື່ອນໄຂຕົວຈິງ ຂອງແຕ່ລະທ່ານເອງ) ຫຼື ຜົນການປະເມີນຄົບຮອບວັນສ້າງຕັ້ງ 45 ປີ ຂອງ ທຫລ. ສຳລັບຜູ້ທີ່ບໍ່ເຄີຍປະເມີນມາກ່ອນແມ່ນຈະບໍ່ໄດ້ຂຽນຂໍ້ນີ້)

**III. ຄວາມຕ້ອງການພັດທະນາຕົນເອງ**

ແມ່ນກຳນົດກ່ຽວກັບຄວາມຕ້ອງການໃນການພັດທະນາເອງ ເພື່ອຈະມານຳໃຊ້ເຂົ້າໃນການປະຕິບັດວຽກງານໃຫ້ມີປະສິດທິພາບຍິ່ງຂຶ້ນ ເຊິ່ງຄວາມຕ້ອງການດັ່ງກ່າວນັ້ນ ຕ້ອງຕິດພັນກັບໜ້າທີ່ວຽກງານຮັບຜິດຊອບຂອງຕົນ ແລະ ຕ້ອງສອດຄ່ອງກັບຄວາມຫຍຸ້ງຍາກໃນການປະຕິບັດວຽກງານທີ່ຕົນໄດ້ຂຽນ.

**IV. ຄວາມຫຍຸ້ງຍາກໃນການປະຕິບັດວຽກງານ**

ແມ່ນໃຫ້ກຳນົດທຸກຂໍ້ຫຍຸ້ງຍາກ ທີ່ເປັນອຸປະສັກໃນການປະຕິບັດວຽກງານເປັນຕົ້ນແມ່ນ ລະດັບຄວາມຮູ້ຄວາມສາມາດ, ລະດັບວິຊາສະເພາະ, ວຽກທີ່ໄດ້ຮັບມອບໝາຍ, ສະພາບແວດລ້ອມການເຮັດວຽກ, ສິ່ງອຳນວຍຄວາມສະດວກ ແລະ ຂໍ້ຫຍຸ້ງຍາກອື່ນທີ່ກ່ຽວຂ້ອງກັບການປະຕິບັດວຽກງານຕົວຈິງ.

**V. ຄວາມເຫັນຂອງຜູ້ບໍລິຫານຂັ້ນຖັດໄປ**

ແມ່ນຄຳເຫັນກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງຄະນະສຳນັກງານ ຄຄຊ ທີ່ມີຕໍ່ຜູ້ກ່ຽວ(ເຈົ້າຂອງໃບປະເມີນ) ເຊິ່ງໃນຂໍ້ນີ້ຈະຕ້ອງຈີ່ງບ່ອນຫວ່າງໃຫ້ ເພື່ອໃຫ້ຄະນະສຳນັກງານ ຄຄຊ ມີຄຳເຫັນ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດໃນທິດທາງດຽວກັນດ້ວຍ.

ຮກ **ຫົວໜ້າພະແນກຫ້ອງການ ແລະ ບໍລິຫານ**

ດາໂວັນ ເດດພົມມະເທດ